ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຍົກລະດັບກ່ຽວກັບການບຳລຸງ, ຮັກສາ ແລະ ນຳໃຊ້ ເຄື່ອງຈັກທຳລາຍ - ຄັດໃຈ້ທະນະບັດ





ໃນລະຫວ່າງ ວັນທີ 19-23 ຕຸລາ 2020 ຜ່ານມານີ້, ກົມພິມຈຳໜ່າຍ ທະນາຄານແຫ່ງ ສປປ ລາວ ໄດ້ຈັດສຳມະນາ "ການນຳໃຊ້ເຄື່ອງຈັກທຳລາຍ ແລະ ເຄື່ອງຈັກຄັດໃຈ້ທະນະບັດ" ໂດຍການເຂົ້າຮ່ວມຂອງທ່ານ ນາງ ພູຄຳ ໄຊຍະວົງ ຮອງຫົວໜ້າກົມພິມຈຳໜ່າຍ (ທຫລ), ພ້ອມດ້ວຍຄະນະຊ່ຽວຊານຂອງບໍລິສັດ Infotech, ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ການສຳມະນາຄັ້ງນີ້, ກໍ່ເພື່ອບຳລຸງຮັກສາ ແລະ ສ້ອມແປງເຄື່ອງຈັກຄັດໃຈ້ທະນະບັດ ແນໃສ່ຍົກລະດັບຄວາມຮູ້-ຄວາມສາມາດຂອງພະນັກງານ ຜູ້ທີ່ເຮັດວຽກກ່ຽວກັບເຄື່ອງຈັກທຳລາຍ ແລະ ເຄື່ອງຈັກຄັດໃຈ້ທະນະບັດ, ເຄື່ອງຈັກທຳລາຍທະນະບັດທີ່ນຳໃຊ້ຢູ່ກົມພິມຈຳໜ່າຍ. ເຮັດໃຫ້ວຽກງານການທຳລາຍທະນະບັດເສື່ອມຄຸນນະພາບມີຄວາມທັນສະໄໝ, ວ່ອງໄວ ແລະ ມີຄວາມປອດໄພສູງ ແລະ ການຄັດໃຈ້ທະນະບັດຂອງ ທຫລ.

ການຈັດຝຶກອົບຮົມຖືວ່າເປັນໄລຍະເວລາອັນສັ້ນໆ, ແຕ່ນັກສຳມະນາກອນກໍ່ໄດ້ເອົາໃຈໃສ່ຕິດຕາມການບັນຍາຍຂອງຊ່ຽວຊານ ແລະ ກໍໄດ້ບັນດາເນື້ອໃນເຕັກນິກ, ວິທີການນຳໃຊ້ບຳລຸງຮັກສາ ແລະ ການສ້ອມແປງເຄື່ອງຈັກພາຍຫຼັງທີ່ສຳເລັດການຝຶກອົບຮົມຈະໄດ້ມີການປະເມີນຜົນການຮຽນ ແລະ ຈະໄດ້ຮັບໃບປະກາດຢັ້ງຢືນຈາກຊ່ຽວຊານ ເພື່ອທີ່ຈະນຳໄປຈັດຕັ້ງປະຕິບັດເຂົ້າໃນວຽກງານວຽກງານທຳລາຍທະນະບັດເສື່ອມຄຸນນະພາບ ແລະ ການຄັດໃຈ້ທະນະບັດ ກໍ່ຄືການນຳໃຊ້ເຄື່ອງຈັກຕົວຈິງໃຫ້ໄດ້ຮັບໝາກຜົນສູງຂຶ້ນ.

**# ຂ່າວ-ພາບ: ທ ສົມພົດ ທຳມະວົງ**

## ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ